**29. ເປັນຫຍັງຜູ້ຖືຮຸ້ນຈຶ່ງຈຳເປັນຕ້ອງເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ?**

ການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແມ່ນ ສິດ ແລະ ໜ້າທີ່ ຂອງຜູ້ຖືຮຸ້ນທັງໝົດທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ. ຜູ້ຖືຮຸ້ນຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເພື່ອເປັນການຮັກສາສິດ ແລະ ຜົນປະໂຫຍດຂອງຕົນ ໃນການຕັດສິນບັນຫາສຳຄັນຂອງບໍລິສັດ, ກຳນົດທິດທາງ ແລະ ແຜນການດຳເນີນທຸລະກິດຂອງບໍລິສັດທີ່ຕົນຖືຮຸ້ນ. ໃນກອງປະຊຸມຜູ້ຖືຮຸ້ນ ຜູ້ຖືຮຸ້ນມີສິດສະເໜີຄຳຄິດຄຳເຫັນ ຫຼື ຕັ້ງຄຳຖາມເຈາະຈີ້ມ ກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ກວດສອບເອກະສານຂອງບໍລິສັດ ເພື່ອປົກປ້ອງຜົນປະໂຫຍດຂອງຕົນຢ່າງເຕັມສ່ວນ.

ດັ່ງນັ້ນ, ເພື່ອເປັນການຮັກສາສິດ ແລະ ຜົນປະໂຫຍດຂອງຕົນ ຜູ້ຖືຮຸ້ນທຸກຄົນຕ້ອງໃຫ້ຄວາມສຳຄັນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນທຸກຄັ້ງ.